# ຄຳແນະນຳກ່ຽວກັບການສັກວັກຊີນ Covid-19 (ການສັກຢາເສີມ) ຄັ້ງທີ່ 3 ສຳລັບຄົນຕ່າງປະເທດ (ອາຍຸ 18 ປີຂຶ້ນໄປ) ທີ່ອາໄສຢູ່ເກົາຫຼີ

ເມື່ອເວລາຜ່ານໄປ ຜົນກະທົບຂອງການສັກຢາວັກຊີນໄດ້ຫຼຸດລົງ, ດັ່ງນັ້ນ ອັນຕະລາຍຂອງການຕິດເຊື້ອກໍ່ເພີ່ມຂຶ້ນ. ເມື່ອສຳເລັດການສັກຢາວັກຊີນຄັ້ງທີ 3 (ການສັກຢາເສີມ), ຜົນກະທົບຂອງການປ້ອງກັນການຕິດເຊື້ອ ແລະ ອາການຮ້າຍແຮງຂອງ Covid-19 ສາມາດມີ ຜົນກະທົບຫຼາຍກວ່າການສັກຢາປ້ອງກັນຂັ້ນພື້ນຖານ.
ໃນເວລາບໍ່ດົນມານີ້, ໃນບັນດາກໍລະນີທີ່ໄດ້ຮັບການຢັ້ງຢືນວ່າຕິດເຊື້ອ Covid-19 ຢູ່ ເກົາຫຼີ,
ອັດຕາການເຊື້ອຂອງຊາວຕ່າງຕ່າງປະເທດແມ່ນສູງ ຍ້ອນການສັກຢາວັກຊີນຄັ້ງທີ່ 3 ຂອງຊາວຕ່າງປະເທດຍັງຕ່ຳ, ສະນັ້ນ
ພວກເຮົາຈຶ່ງຮຽກຮ້ອງໃຫ້ທ່ານໄປສັກຢາວັກຊີນຄັ້ງທີ່ 3 ເພື່ອຮັບ ປະກັນຊີວິດທີ່ປອດໄພໃນປະເທດເກົາຫຼີ.
ຄົນຕ່າງປະເທດທີ່ມີອາຍຸ **18** ປີຂຶ້ນໄປ ທີ່ໄດ້ສັກຢາວັກຊີນຂັ້ນພື້ນຖານໃນເກົາຫຼີ ຫຼື ຢູ່ຕ່າງປະເທດສາມາດຮັບວັກຊີນ ຄັ້ງທີ **3** **(ການສັກຢາເສີມ)** ໄດ້ໂດຍບໍ່ເສຍຄ່າ.

○ ໄລຍະສັກຢາວັກຊີນ

- ຫຼັງຈາກການສັກຢາປ້ອງກັນຂັ້ນພື້ນຖານແລ້ວ, ທ່ານສາມາດສັກຢາວັກຊີນຄັ້ງທີ 3 ຫຼັງຈາກ 3 ເດືອນ (90 ມື້). ຜູ້ທີ່ໄດ້ຮັບຢາວັກຊີນ Janssen ສາມາດໄດ້ຮັບວັກຊີນຄັ້ງທີ 2 (ການສັກຢາເສີມ) ຫຼັງຈາກ 2 ເດືອນຜ່ານໄປ (60 ມື້).

  * ການສັກຢາປ້ອງກັນພື້ນຖານ: ການສັກຢາຄັ້ງທີສອງໃນກໍລະນີຂອງ Pfizer·Moderna·AstraZeneca, ການສັກຢາຄັ້ງດຽວໃນກໍລະນີຂອງ Janssen.

- ຖ້າທ່ານບໍ່ໄດ້ຮັບການສັກຢາວັກຊີນຄັ້ງທີ 3 ພາຍໃນ 6 ເດືອນຫຼັງຈາກສຳເລັດການສັກຢາວັກຊີນຂັ້ນພື້ນຖານ, ທ່ານຈະສູນເສຍຜົນກະທົບຂອງ ການຜ່ານການສັກຢາວັກຊີນ. ຢ່າງໃດກໍ່ຕາມ, ທັນທີທີ່ທ່ານໄດ້ຮັບການສັກຢາວັກຊີນຄັ້ງທີ 3, ຜົນກະທົບຂອງການຜ່ານຈະຖືກຟື້ນຟູທັນທີ.

○ ປະເພດຢາວັກຊີນ ແລະ ສະຖານທີ່ສັກຢາ

- ປະຈຸບັນ, ການສັກຢາວັກຊີນຄັ້ງທີ 3 ແມ່ນກຳລັງປະຕິບັດດ້ວຍຢາວັກຊີນ mRNA (Pfizer, Modern, ໃນຈຳນວນຜູ້ທີ່ໄດ້ຮັບວັກຊີນ Janssen, ຖ້າທ່ານຕ້ອງການສັກຢາວັກຊີນຄັ້ງທີ 2 (ການສັກຢາເສີມ) ດ້ວຍຢາວັກຊີນ Janssen, ກະລຸນາສອບຖາມກັບສູນສາທາລະນະສຸກທີ່ໃກ້ທີ່ສຸດ.
- ໂດຍບໍ່ຄຳນຶງເຖິງການຄຸ້ມຄອງປະກັນໄພສຸຂະພາບຂອງທ່ານ, ທ່ານສາມາດໄດ້ຮັບການສັກຢາວັກຊີນຈາກສະຖາບັນການແພດ ຫຼື ສູນສຸຂະພາບສາທາລະນະ ທີ່ສະໜອງການສັກຢາວັກຊີນ Covid-19.

○ ວິທີການຈອງ

① ຄົນຕ່າງປະເທດທີ່ສຳເລັດການສັກຢາວັກຊີນຂັ້ນພື້ນຖານໃນເກົາຫຼີ

**1)** ເອກະສານຄົນຕ່າງປະເທດ: ຄືກັນກັບການສັກຢາວັກຊີນຂັ້ນພື້ນຖານ, ທ່ານສາມາດຈອງການສັກຢາວັກຊີນອອນລາຍ ຫຼື ທາງໂທລະສັບ.

  * ການຈອງອອນລາຍ: ເຊື່ອມຕໍ່ກັບລະບົບການຈອງການສັກຢາວັກຊີນ Covid-19 (https://ncvr.kdca.go.kr) ແລະ ເຮັດການຈອງຫຼັງຈາກ ການກວດສອບລະຫັດປະຈຳຕົວ ID.

  ** ການຈອງໂທລະສັບ: ຕິດຕໍ່ສູນຄວບຄຸມ ແລະ ປ້ອງກັນພະຍາດເກົາຫຼີ (Korea Disease Control and Prevention Agency) (☏1339) ຫຼື ໂທຫາເບີໂທລະສັບທີ່ປຶກສາການຈອງຂອງແຕ່ລະທ້ອງຖິ່ນ (ເຊື່ອມຕໍ່ຫາ https://ncv.kdca.go.kr → Check 'ການຈອງໂທລະສັບການສັກຢາວັກຊີນ Covid-19 ໃນປະຈຸບັນ')

2) ຄົນຕ່າງປະເທດທີ່ບໍ່ມີເອກະສານ **(ລວມທັງຄົນຕ່າງປະເທດທີ່ເຂົ້າພັກຢ່າງຜິດກົດໝາຍ):**
ໂດຍໃຊ້ໝາຍເລກຄວບຄຸມຊົ່ວຄາວທີ່ເຈົ້າໄດ້ຮັບຈາກ ສູນສາທາລະນະສຸກ ເມື່ອເຈົ້າໄດ້ຮັບການສັກຢາວັກຊີນຂັ້ນພື້ນຖານແລ້ວ, ທ່ານສາມາດຈອງຜ່ານທາງໂທລະສັບ ຫຼື ໄປຢ້ຽມຢາມອົງການການສັກຢາວັກຊີນ (ສະຖາບັນການແພດ ຫຼື ສູນສຸຂະພາບສາທາລະນະ).

② ຄົນຕ່າງປະເທດທີ່ສຳເລັດການສັກຢາວັກຊີນຂັ້ນພື້ນຖານຢູ່ຕ່າງປະເທດ **(ລວມທັງຄົນຕ່າງປະເທດທີ່ພັກຢູ່ໃນເກົາຫຼີສັ້ນກວ່າ 90 ມື້)**

- ໄປຢ້ຽມຢາມສູນສຸຂະພາບສາທາລະນະທີ່ໃກ້ທີ່ສຸດພ້ອມກັບບັດປະຈຳຕົວຂອງທ່ານ, ຮັບເອົາເລກຄວບຄຸມຊົ່ວຄາວ, ລົງທະບຽນບັນທຶກການສັກຢາວັກຊີນ ຢູ່ຕ່າງປະເທດຂອງພວກເຮົາ ແລະ ຈອງຜ່ານທາງໂທລະສັບ ຫຼື ໄປຢ້ຽມຢາມອົງການການສັກຢາວັກຊີນ (ສະຖາບັນການແພດ ຫຼື ສູນສາທາລະນະ) ເພື່ອເຮັດການຈອງ.

  * ຄົນຕ່າງປະເທດທີ່ມີເອກະສານບໍ່ຈຳເປັນຕ້ອງໄດ້ຮັບເລກຄວບຄຸມຊົ່ວຄາວ.

※ ການອ້າງອີງ

- ຂໍ້ມູນທີ່ກ່ຽວຂ້ອງກັບບັດປະຈຳຕົວຂອງທ່ານຈະຖືກໃຊ້ເພື່ອຈຸດປະສົງຂອງການສັກຢາວັກຊີນເທົ່ານັ້ນ ແລະ ການຝຶກເຊົາທີ່ຜິດກົດໝາຍ ຂອງທ່ານຈະບໍ່ຖືກແຈ້ງໃຫ້ບໍລິການຄົນເຂົ້າເມືອງຂອງເກົາຫຼີ ພາຍໃຕ້ການຍົກເວັ້ນຄວາມຮັບຜິດຊອບຂອງການແຈ້ງເຕືອນ.
- ສຳລັບລາຍລະອຽດເພີ່ມເຕີມ, ກະລຸນາເບິ່ງທີ່ໜ້າຫຼັກຂອງການສັກຢາວັກຊີນ Covid-19 ຂອງອົງການຄວບຄຸມ ແລະ ປ້ອງກັນພະຍາດເກົາຫຼີ (KDCA) (https://ncv.kdca.go.kr).

ກະຊວງຄວາມສະເໝີພາບຍິງ-ຊາຍ ແລະ ຄອບຄົວ ອົງການຄວບຄຸມ ແລະ ປ້ອງກັນພະຍາດເກົາຫຼີ

<ການແປນີ້ແມ່ນເຮັດໂດຍ ສູນໂທ **Danuri** ໂທລະສັບ: **1577-1366**